**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສຶກສາທິການ ແລະ ກິລາ

ພາກວິຊາຄູ ພາສາອັງກິດ-ໄອຊີທີ ເລກທີ 015/ອກ.ອທ

ນະຄອນຫຼວງວຽງຈັນ, ວັນທີ 23 ເມສາ 2024

# ບົດສະຫຼຸບປະຈຳເດືອນ 4/2024
# ແລະ ແຜນວຽກຈຸດສຸມເດືອນ 5/2024

**ຮຽນ:** ທ່ານ ຜູ້ອຳນວຍການວິທະຍາໄລຄູ ດົງຄຳຊ້າງ

**ເລື່ອງ:** ບົດສະຫຼຸບປະຈຳເດືອນ 4/2024 ແລະ ແຜນວຽກຈຸດສຸມປະຈຳເດືອນ 5/2024 ຂອງພາກວິຊາຄູ ພາສາອັງກິດ-ໄອຊີທີ

ພາກວິຊາຄູ ພາສາອັງກິດ-ໄອຊີທີ ໄດ້ສັງລວມແຜນການເຄື່ອນໄຫວປະຈຳເດືອນ 4/2024 ແລະ ແຜນຈຸດສຸມປະຈຳເດືອນ 5/2024 ດັ່ງນີ້:

## I. ການເຄື່ອນໄຫວວຽກງານທີ່ພົ້ນເດັ່ນປະຈຳເດືອນ 4/2024

### ກ. ວຽກງານແນວຄິດການເມືອງ, ການຈັດຕັ້ງ ແລະ ນະໂຍບາຍ

1. ພະນັກງານສ່ວນຫຼາຍມີແນວຄິດຫຼັກໝັ້ນດີ ແລະ ມີຄວາມອຸ່ນອ່ຽງທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ.
2. ມີຄວາມຮັບຜິດຊອບຕໍ່ໜ້າທີ່ມອບໝາຍໃຫ້ເປັນຢ່າງດີ.
3. ປະຕິບັດ ແລະ ນັບຖືລະບຽບຂອງພັກ-ລັດໄດ້ເປັນຢ່າງດີເຊິ່ງມັນໄດ້ສະແດງອອກໃນການປະຕິບັດໂມງເວລາ ແຕ່ງກາຍ, ການໄປ-ການມາ ແລະ ການປະຕິບັດວຽກງານແຕ່ລະໜ້າວຽກ.

### ຂ. ວຽກງານວິຊາສະເພາະ

1. ຄູທຸກຄົນໄດ້ເອົາໃຈໃສ່ຂຶ້ນຫ້ອງສອນເປັນປົກກະຕິ.
2. ນຳພານັກສຶກສາຄູອອກແຮງງານໃນຕອນແລງວັນພຸດ
3. ນຳພານັກສຶກສາຄູພາຍໃນສາຍອອກແຮງງານໃນເຂດຮັບຜິດຊອບ
4. ຮຽບຮຽງເອກະສານປະກອບການສອນພັກສິ້ນປີຮຽນ
5. ຮຽບຮຽງເອກະສານປະກອບການບັນລະຍາຍພັກສິ້ນປີຮຽນ
6. ໄປສະຫຼຸບຂະບວນຝຶກຫັດ
7. ລວມນັກສຶກສາພາຍໃນສາຍທີ່ລົງຝຶກສອນຕົວຈິງ ເພື່ອລາຍງານສະພາບການຈັດການຮຽນການສອນທີ່ຜ່ານມາ ແລະ ແຜນໃນຕໍ່ໜ້າ
8. ເຂົ້າຮ່ວມກອງປະຊຸມຝຶກອົບຮົມຍົກສູງຂີດຄວາມສາມາດ ຂອງຄູຊົນນະບົດໃນ ຊປປ ລາວ ທີ່ນະຄອນຄຸນມິງ ແຂວງຢູນານ ສປ ຈີນ ຄັ້ງທີ 20 ມີນາ ຫາ 9 ເມສາ 2024
9. ເຂົ້າຮ່ວມກອງປະຊຸມຝຶກອົບຮົມສ້າງຂີດຄວາມສາມາດ ໃນການຫັນປ່ຽນຫຼັກສູດແລະການສອນ ໃຫ້ແກ່ບຸກຄະລາກອນສ້າງຄູ ໃນ ສປປ ລາວ

10. ກອງປະຊຸມຝຶກອົບຮົມແນະນຳການນຳໃຊ້ແບບຟອມສັງເກດການສອນໃນຫ້ອງຮຽນຊັ້ນປະຖົມສຶກສ າ ໃຫ້ແກ່ຜູ້ເຮັດວຽກສຶກສານິເທດ ເມືອງເປົ້າໝາຍສາມສ້າງ ແລະ ວິທະຍາໄລຄູ 8 ແຫ່ງ 11 – 20ມີນາ 2024 ທີ່ຫ້ອງປະຊຸມສະໂມສອນໄຟຟ້າເຂື່ອນນໍ້າງື່ມທ່າລາດ ເມືອງແກ້ວອຸດົມ ແຂວງວຽງຈັນ

❖ **ຂໍ້ຄົງຄ້າງ:** ຍັງມີບາງວຽກທີ່ຕ້ອງໄດ້ສືບຕໍ່ປະຕິບັດ ແລະ ປະຕິບັດແບບຕໍ່ເນື່ອງ

## II. ແຜນວຽກຈຸດສຸມປະຈຳເດືອນ 5/2024

### ກ. ວຽກງານແນວຄິດການເມືອງ, ການຈັດຕັ້ງ ແລະ ນະໂຍບາຍ

1. ສືບຕໍ່ແນວຄິດຫຼັກໝັ້ນ, ເຊື່ອໝັ້ນຕໍ່ການນຳພາຂອງຂອງພັກ
2. ມີຄວາມຮັບຜິດຊອບຕໍ່ໜ້າທີ່ມອບໝາຍໃຫ້ເປັນຢ່າງດີ.
3. ຫ້າວຫັນປະຕິບັດ ແລະ ນັບຖືລະບຽບຂອງພັກ-ລັດ

### ຂ. ວຽກງານວິຊາສະເພາະ

1. ສືບຕໍ່ຂຶ້ນຫ້ອງສອນປົກກະຕິ.
2. ສືບຕໍ່ນຳພານັກສຶກສາອອກແຮງງານໃນເຂດຮອບຜິດຊອບ
3. ສືບຕໍ່ການຮຽນບົດວິໄຈ
4. ສອບເສັງນັກສຶກສາຄູປົກກະຕິ
5. ອ່ານບົດວິໄຈ ແລະ ປ້ອງກັນບົດວິໄຈນັກສຶກສາປີສຸດທ້າຍ
6. ຈັດຕາຕາລາງການສອນຊ່ວງພັກສິ້ນປີຮຽນ
7. ຝຶກອົບຮົມ ການຈັດການຮຽນການສອນ ທີ່ຄຳນຶ່ງເຖິງບົດບາດຍິງຊາຍ ໃຫ້ແກ່ຄູສອນໃນສະຖາບັນສ້າງຄູ
8. ຂຶ້ນແຜນຝຶກອົບຮົມການສອນພາສາອັງກິດໃຫ້ແກ່ຄູສອນໃນວິທະຍາໄລຄູ ດົງຄຳຊ້າງ

## III. ຂໍ້ສະເໜີ

ດັ່ງນັ້ນ, ພາກວິຊາຄູ ພາສາອັງກິດ-ໄອຊີທີ ຈຶ່ງລາຍງານມາຍັງທ່ານເພື່ອຮັບຊາບຕາມທາງຄວນດ້ວຍ.

**ຫົວໜ້າພາກວິຊາຄູ ພາສາອັງກິດ-ໄອຊີທີ** **ຜູ້ສັງລວມ**